# ໂຄງການຄອບຄົວປະສົບຜົນສຳເລັດ

ພຶດສະພາ 2008

ໂຄງການຄອບຄົວປະສົບຜົນສຳເລັດມີການບໍລິການສຳລັບບັນດາຄອບຄົວທີ່ມີລາຍໄດ້ຕ່ຳ. ການບໍລິການເຫຼົ່ານີ້ປະກອບມີດັ່ງຕໍ່ໄປນີ້:

- ໃຫ້ການຊ່ວຍເຫຼືອເງິນສົດ, ຍັງຮູ້ກັນໃນນາມການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວ (TAF)
- ຊ່ວຍເຫຼືອຜູ້ໃຫຍ່ໃນເລື່ອງບັນຫາການຊອກວຽກເຮັດ
- ໃຫ້ການບໍລິການສະໜັບສະໜູນສຳລັບການເຮັດວຽກ, ການຝຶກອົບຮົມ, ກິດຈະກຳການເຮັດວຽກ, ແລະ ການສຶກສາ

ໂຄງການໃຫ້ການຊ່ວຍເຫຼືອຄອບຄົວໃນການຮຽນຮູ້ທັກສະໃໝ່ໆ, ເສີມສ້າງຈາກຄວາມສາມາດໃນປະຈຸບັນຂອງເຂົາເຈົ້າ, ແລະ ໃຫ້ການດູແລເບິ່ງແຍງເດັກນ້ອຍໃນເຮືອນຂອງເຂົາເຈົ້າ.

ເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອຈາກໂຄງການຄອບຄົວປະສົບຜົນສຳເລັດ, ຄອບຄົວໃດໜຶ່ງຢ່າງນ້ອຍຕ້ອງມີເດັກໜຶ່ງຄົນຢູ່ໃນເຮືອນທີ່ມີອາຍຸຕ່ຳກວ່າ 18 ປີ. ເດັກນ້ອຍນີ້ອາດຈະແມ່ນເດັກຢູ່ໃນທ້ອງແມ່ທີ່ຍັງບໍ່ທັນເກີດກໍ່ໄດ້. ເດັກອາດຈະອາໃສຢູ່ນຳພໍ່ແມ່ ຫຼື ຍາດພີ່ນ້ອງກໍ່ໄດ້. ນອກນັ້ນ ເດັກອາດຈະອາໃສຢູ່ນຳບຸກຄົນໃດໜຶ່ງທີ່ສານມອບໝາຍໃຫ້ເປັນຜູ້ດູແລເບິ່ງແຍງເດັກກໍ່ໄດ້, ເຊັ່ນວ່າຜູ້ປົກຄອງ, ຜູ້ປົກປ້ອງ, ຫຼື ຜູ້ດູແລ.

ນອກນັ້ນ ຄອບຄົວຍັງຕ້ອງເປັນຜູ້ມີລາຍໄດ້ຕ່ຳ ແລະ ມີຊັບພະຍາກອນບໍ່ຫຼາຍ. ລາຍຮັບຂອງສະມາຊິກຄອບຄົວທຸກຄົນໃນເຮືອນແມ່ນຈະຖືກນັບ. ລາຍຮັບບາງ ແລະຊັບພະຍາກອນບາງປະເພດຈະບໍ່ຖືກນັບ, ເຊັ່ນວ່າ:

- ເຮືອນບ່ອນທີ່ຄອບຄົວອາໃສຢູ່
- ຊັບສິນທີ່ມີມູນຄ່າຕ່ຳກວ່າ $2,000
- ລົດ
- ເຟີນິເຈີ, ສິ່ງຂອງສ່ວນບຸກຄົນ, ແລະ ອຸປະກອນບາງຢ່າງ
- $90 ບວກກັບ 60% ຂອງເງິນທີ່ຫາໄດ້

ຄອບຄົວອາດຈະໄດ້ຮັບການຊ່ວຍເຫຼືອເງິນສົດໃນຂະນະທີ່ເຂົາເຈົ້າຊອກຫາວຽກເຮັດ ຕາບໃດທີ່ເຂົາເຈົ້າຕອບສະໜອງໄດ້ຕາມຂໍ້ກຳນົດຂອງໂຄງການ. ສິ່ງນີ້ລວມມີການຮ່ວມມືກັບໂຄງການອຸດໜູນລ້ຽງດູເດັກ. ຄອບຄົວພຽງແຕ່ສາມາດໄດ້ຮັບການຊ່ວຍເຫຼືອ TAF ເປັນເວລາ 60 ເດືອນໃນຕະຫຼອດຊີວິດເທົ່ານັ້ນ.

ຄອບຄົວຜູ້ທີ່ໄດ້ຮັບການຊ່ວຍເຫຼືອ TAF ອາດຈະຍັງໄດ້ຮັບການອຸດໜູນການປິ່ນປົວສຸຂະພາບ ແລະ ການດູແລເດັກນຳອີກ.

ລະດັບຜົນປະໂຫຍດການອຸດໜູນເງິນສົດແມ່ນອີງໃສ່ລາຍຮັບຂອງຄອບຄົວ. ນອກນັ້ນ ມັນຍັງອີງໃສ່ເຂດປົກຄອງບ່ອນທີ່ຄອບຄົວອາໃສຢູ່ນຳອີກ. ຕະຕະລາງຂ້າງລຸ່ມສະແດງໃຫ້ເຫັນຜົນປະໂຫຍດເງິນສົດສູງສຸດທີ່ຂະໜາດຄອບຄົວໃດໜຶ່ງອາດຈະໄດ້ຮັບ.

| ການຈ່າຍເງິນຊ່ວຍເຫຼືອເງິນສົດ | | | | |
|---|---|---|---|---|
| ຂະໜາດຄອບຄົວ | ເຂດປົກຄອງຊົນນະບົດ | ເຂດປົກຄອງຊົນນະບົດທີ່ມີຄ່າໃຊ້ຈ່າຍສູງ | ເຂດປົກຄອງທີ່ມີພົນລະເມືອງຫຼາຍ | ເຂດປົກຄອງທີ່ມີພົນລະເມືອງຫຼາຍ ແລະມີຄ່າໃຊ້ຈ່າຍສູງ |
| 1 | $224 | $229 | $241 | $267 |
| 2 | $309 | $314 | $326 | $352 |
| 3 | $386 | $391 | $403 | $429 |
| 4 | $454 | $459 | $471 | $497 |
| 5 ຂຶ້ນໄປ | ບວກຕື່ມ $61 ສຳລັບແຕ່ລະຄົນເພີ່ມຕື່ມ | | | |

ຄອບຄົວສາມາດໄດ້ຮັບການບໍລິການສະໜັບສະໜູນປະເພດອື່ນອີກເພື່ອຊ່ວຍໃນການກຽມຕົວເຂົາເຈົ້າເພື່ອເຮັດວຽກ. ພວກເຂົາອາດຈະໄດ້ຮັບການບໍລິການຊ່ວຍເຫຼືອປະເພດເຫຼົ່ານີ້ໃນຂະນະທີ່ເຂົາເຈົ້າໄດ້ຮັບການຊ່ວຍເຫຼືອເງິນສົດ. ການບໍລິການເຫຼົ່ານີ້ສາມາດສືບຕໍ່ເປັນເວລາໜຶ່ງປີ ຫຼັງຈາກເຂົາເຈົ້າເຊົາໄດ້ຮັບການຊ່ວຍເຫຼືອເງິນສົດ. ຄອບຄົວອາດຈະໄດ້ຮັບການບໍລິການ ແລະການສະໜັບສະໜູນຊ່ວຍເຫຼືອຫຼາຍໆຢ່າງ, ເຊິ່ງປະກອບມີດັ່ງຕໍ່ໄປນີ້:

ການຊ່ວຍເຫຼືອໃນການຊອກວຽກເຮັດ ແລະ ຮັກສາວຽກເຮັດ
ປະສົບການເຮັດວຽກ
ການບໍລິການສຳລັບຜູ້ພິການໃນການຮຽນຮູ້, ຜູ້ມີບັນຫາຕິດຢາເສບຕິດ ຫຼືຕິດເຫຼົ້າ, ຫຼື ຜູ້ມີຄວາມຮຸນແຮງໃນຄອບຄົວ
ການບໍລິການເພື່ອຊ່ວຍເຫຼືອໃນການອ່ານ ແລະ ຄະນິດສາດ
ການບໍລິການສຸຂະພາບຈິດ

ການດູແລສຸຂະພາບຮ່າງກາຍ
ການຊ່ວຍເຫຼືອໃນການຮັບມືກັບຄວາມພິການ
ການຊ່ວຍເຫຼືອໃນການລ້ຽງລູກ
ການຊ່ວຍເຫຼືອໃນການໄດ້ຮັບແຂ້ວປອມ, ແວ່ນຕາ, ອຸປະກອນຊ່ວຍການໄດ້ຍິນ
ການຝຶກອົບຮົມວຽກເຮັດ
ການຊ່ວຍເຫຼືອໃນການໄດ້ຮັບການສຶກສາທົ່ວໄປ GED ຫຼື ການຮຽນພາສາອັງກິດ
ການຊ່ວຍເຫຼືອໃນການໄປຫາບ່ອນເຮັດວຽກ
ເສື້ອຜ້າ
ການຊ່ວຍເຫຼືອໃນດ້ານຄວາມຕ້ອງການພື້ນຖານ
ຄ່າໃຊ້ຈ່າຍໃນການຍ້າຍບ່ອນຢູ່ທີ່ກ່ຽວຂ້ອງກັບວຽກເຮັດ

ຜູ້ໃຫຍ່ຕ້ອງໄດ້ເຮັດສິ່ງໃດໜຶ່ງໃນຕໍ່ໄປນີ້ເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອເງິນສົດສຳລັບຄອບຄົວຂອງເຂົາເຈົ້າ:

ເຮັດວຽກ ຫຼື ເຂົ້າຮ່ວມໃນກິດຈະກຳເຮັດວຽກ
ເຂົ້າຮ່ວມໃນບັນດາໂຄງການເພື່ອຊ່ວຍຫຼຸດຜ່ອນອຸປະສັກໃນການເຮັດວຽກ
ດູແລເບິ່ງແຍງເດັກທີ່ມີອາຍຸຕໍ່າກວ່າ 6 ເດືອນ
ດູແລເບິ່ງແຍງສະມາຊິກຄົວເຮືອນທີ່ພິການ

ບຸກຄົນຜູ້ທີ່ບໍ່ຖືກກຳນົດໃຫ້ມີວຽກເຮັດ ຫຼືເຂົ້າຮ່ວມໃນກິດຈະກຳເຮັດວຽກອາດຈະສະໝັກຂໍເອົາການບໍລິການໄດ້.

## ຄຳຮ້ອງສະໝັກ

ຄລິກທີ່ນີ້ ເພື່ອເຂົ້າເບິ່ງຄຳຮ້ອງສະໝັກຂໍເອົາການບໍລິການຂອງພວກເຮົາ.

ສຳລັບການບໍລິການອື່ນ, ຫຼື ເພື່ອຊອກຫາຫ້ອງການບໍລິການສັງຄົມ ແລະການຟື້ນຟູ ຫຼື ຈຸດບໍລິການ ໃກ້ເຂດທ່ານ, ໃຫ້ນຳໃຊ້ຕົວເຊື່ອມຕໍ່ (links) ຢູ່ສ່ວນທ້າຍຂອງໜ້ານີ້.

ກັບຄືນໄປໜ້າ EES ທຳອິດ

ໜ້າອັບເດດຂໍ້ມູນລ້າສຸດ: ວັນທີ 20 ຕຸລາ 2008